# 『ຊ້າງສີເຫຼືອງເພື່ອຊ່ວຍຄິດໄລ່ການຄູນທີ່ມີຈື່』



【ຊັ້ນຮຽນ】　ປໍ 3

【ຈຸດປະສົງ-ແນໃສ່】　ໃຫ້ນັກຮຽນສາມາດຄິດໄລ່ເກັ່ງກ່ວາແລະຖືກກ່ວາດ້ວຍໃຫ້ນັກຮຽນຂຽນຈຳນວນຈື່ເປັນຂຽນນ້ອຍໃສ່ໃນຮູບແບບທາງຕັ້ງເວລາຄິດໄລ່ການຄູນທີ່ມີຈື່.

【ວັດຖຸທີ່ຜະລິດ】

- ແຜນສີຢ່າງ 5ສີ
  (ສີຂາວ･ເຫຼືອງ･ບົວ･ຟ້າ･ຂຽວ)

【ວິທີນຳໃຊ້】

- ຕິດອຸປະກອນ「ຊ້າງສີເຫຼືອງເພື່ອຊ່ວຍຄິດໄລ່ການຄູນທີ່ມີຈື່」ໃສ່ກະດານແລ້ວຂຽນຮູບແບບຢູ່ບ່ອນວ່າງໃນອຸປະກອນນັ້ນ.

  (ຕົວຢ່າງ)　143　×　6

  ເວລາຄິດໄລ່ການຄູນມີຈື່ທີ່ຈຳນວນມີ3ຫຼັກຄູນໃຫ້ຈຳນວນຫຼັກດ່ຽວ,ໃຫ້ນັກຮຽນຄິດໄລ່ຕາມ 5ຂັ້ນຕອນດັ່ງລຸ່ມນີ້.







① 【ການຄິດໄລ່ຢູ່ຫຼັກຫົວໜ່ວຍ】

6　×　3　＝　18

ຂຽນ 8 ໃສ່ຢູ່ຫົວໜ່ວຍທີ່ບ່ອນສີເຫຼືອງ.

② 【ການຈື່ໜຶ່ງຈົນເຖິງຫຼັກຫົວສິບ】

ຂຽນ 1 ໃສ່ຢູ່ຫົວສິບທີ່ຮູບວົງມົນແລະສີເຫຼືອງ.

③ 【ການຄິດໄລ່ຢູ່ຫຼັກຫົວສິບ】

6　×　4　＝　24

ຈື່ 1 ບວກໃຫ້ 4 ທີ່ມາແຕ່ 24 ເທົ່າກັບ 5.

ຂຽນ 5 ໃສ່ຢູ່ຫົວສິບທີ່ບ່ອນສີບົວ.

④ 【ການຈື່ໜຶ່ງຈົນເຖິງຫຼັກຫົວຮ້ອຍ】

ຂຽນ 2 ໃສ່ຢູ່ຫົວຮ້ອຍທີ່ຮູບວົງມົນແລະສີບົວ.

⑤ 【ການຄິດໄລ່ຢູ່ຫຼັກຫົວຮ້ອຍ】

6　×　1　＝　6

ຈື່ 2 ບວກໃຫ້ 6 ເທົ່າກັບ 8.

ຂຽນ 8 ໃສ່ຢູ່ຫົວຮ້ອຍທີ່ບ່ອນສີຟ້າ.

143　×　6　＝　858



※ຕ້ອງການນຳໃຊ້ອຸປະກອນນີ້ຈົນເຖິງນັກຮຽນເຂົ້າໃຈລຳດັບຂອງການໄລ່ເລກຄູນມີຈື່ແລະສາມາດຄິດໄລ່ເກັ່ງ.